ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ຜູ້ວ່າການ ທຫລ ເຂົ້າຮ່ວມ ພິທີເປີດການນຳໃຊ້ລະບົບສື່ສານພາກລັດ




(ນັບຈາກຊ້າຍມືລຳດັບທີ 11)

ໃນວັນທີ 6 ເມສາ 2026, ທ່ານ ນ. ບຸນຄຳ ວໍລະຈິດ ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ເຂົ້າຮ່ວມພິທີເປີດການນຳໃຊ້ລະບົບສື່ສານພາກລັດ (G-chat V2+Lao AI) ທີ່ ໂຮງແຮມ ລາດຊະວົງ ວິນດາ ວິສຕາ ຊຶ່ງໃນພິທີຄັ້ງນີ້ ໄດ້ຮັບກຽດເຂົ້າຮ່ວມຂອງ ທ່ານ ສະເຫຼີມໄຊ ກົມມະສິດ, ຮອງນາຍົກລັດຖະມົນຕີ ຜູ້ປະຈຳການ, ມີບັນດາ

ທ່ານລັດຖະມົນຕີ-ຮອງລັດຖະມົນຕີ ແລະ ທຽບເທົ່າ ຂອງບັນດາກະຊວງ-ອົງການລັດທຽບເທົ່າກະຊວງ, ບັນດາອົງການຈັດຕັ້ງມະຫາຊົນ ແລະ ບັນດາແຂກທີ່ຖືກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ.

ການຈັດພິທີເປີດການນຳໃຊ້ລະບົບສື່ສານພາກລັດ ໃນຄັ້ງນີ້ ກໍເພື່ອເປັນການປະຕິບັດຕາມທິດຊີ້ນຳຂອງພັກ-ລັດຖະບານ ຕໍ່ກັບການຫັນ ສປປ ລາວ ໃຫ້ເປັນດິຈິຕອນ (Digital) ຄື: ລັດຖະບານ ດິຈິຕອນ, ເສດຖະກິດ ດິຈິຕອນ ແລະ ສັງຄົມ ດິຈິຕອນ. ສະນັ້ນ, ກະຊວງເຕັກໂນໂລຊີ ແລະ ການສື່ສານ ຈຶ່ງມີຄວາມຈຳເປັນໃນການພັດທະນາລະບົບດັ່ງກ່າວ ຊຶ່ງປະກອບມີ 3 ເປົ້າໝາຍຫຼັກ ຄື: **1)** ຍົກລະດັບຄວາມປອດໄພທາງໄຊເບີ: ເພື່ອປົກປ້ອງຂໍ້ມູນຂ່າວສານທີ່ສຳຄັນຂອງຊາດ ໃຫ້ມີຄວາມປອດໄພສູງສຸດ, ປ້ອງກັນການເຂົ້າເຖິງ ທີ່ບໍ່ໄດ້ຮັບອະນຸຍາດ ແລະ ສະກັດກັ້ນບັນຫາຂໍ້ມູນຮົ່ວໄຫຼ; **2)** ສ້າງຄວາມເຂັ້ມແຂງ ແລະ ເປັນເອກະລາດທາງດ້ານເຕັກໂນໂລຊີ: ເພື່ອຫຼຸດຜ່ອນການເພິ່ງພາສື່ສັງຄົມອອນລາຍ ຈາກຕ່າງປະເທດ ໃນການຮັບ-ສົ່ງເອກະສານທາງລັດຖະການ ທີ່ມີຄວາມສ່ຽງຕໍ່ຄວາມໝັ້ນຄົງຂອງຂໍ້ມູນ; **3)** ການບໍລິຫານລັດທີ່ທັນສະໄໝ: ເພື່ອເພີ່ມປະສິດທິພາບ, ຄວາມວ່ອງໄວ, ໂປ່ງໃສ ແລະ ຫຼຸດຜ່ອນຂັ້ນຕອນການປະສານງານລະຫວ່າງພາກສ່ວນຕ່າງໆ.

ຈຸດເດັ່ນທີ່ສຳຄັນຂອງ G-Chat V2 + Lao AI ແມ່ນການເຊື່ອມໂຍງເຂົ້າກັບລະບົບປັນຍາປະດິດລາວ **(Lao AI)** ເຊິ່ງເປັນລະບົບປັນຍາປະດິດແຫ່ງຊາດ ທີ່ຈະເຮັດໜ້າທີ່ເປັນ "ຜູ້ຊ່ວຍອັດສະລິຍະ" ໃຫ້ລັດຖະກອນ ເພື່ອຊ່ວຍສະຫຼຸບເນື້ອໃນເອກະສານທີ່ຍາວ ໃຫ້ມີຄວາມກະທັດຮັດ, ຊ່ວຍຮ່າງເອກະສານທາງລັດຖະການ, ຕອບຄຳຖາມ ກ່ຽວກັບລະບຽບການຕ່າງໆ ແລະ ສາມາດແປພາສາ ໄດ້ຢ່າງຊຳນານ. ການນຳເອົາ Lao AI ເຂົ້າມາຊ່ວຍນີ້ ຈະຊ່ວຍຫຼຸດຜ່ອນຂັ້ນຕອນການເຮັດວຽກທີ່ຊ້ຳຊ້ອນ ແລະ ປະຢັດເວລາ ໃນການເຮັດວຽກວິຊາສະເພາະໄດ້ຢ່າງຫຼວງຫຼາຍ.

ຕອນທ້າຍຂອງພິທີ, ທ່ານ ລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ ໄດ້ຮຽກຮ້ອງມາຍັງທຸກກະຊວງ-ອົງການ ແລະ ພາກສ່ວນຕ່າງໆ ຈົ່ງພ້ອມກັນນຳໃຊ້ລະບົບ **G-Chat v2 + Lao AI** ນີ້ ເຂົ້າໃນການປະຕິບັດໜ້າທີ່ວຽກງານຕົວຈິງ ຢ່າງຈິງຈັງ ເພື່ອກ້າວໄປສູ່ການສ້າງລັດຖະບານດິຈິຕອນ ທີ່ທັນສະໄໝ, ປອດໄພ ແລະ ສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງຍຸກສະໄໝ ຢ່າງແທ້ຈິງ.

**ຮຽບຮຽງຂ່າວ-ພາບ: ຫ້ອງການ ທຫລ**

**ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ**